ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ສະຖາບັນພັດທະນາສີມືແຮງງານ

ເລກທີ: 1202 /ສພງ

ນະຄອນຫຼວງວຽງຈັນ, ວັນທີ: 01 ສິງຫາ ໒໐໒໕

## ໜັງສືເຊີນ ເຂົ້າຮ່ວມການປະມູນ

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນພັດທະນາສີມືແຮງງານ (ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ) ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2025 ເພື່ອດໍາເນີນການປະມູນ ການປັບປຸງ-ຕໍ່ເຕີມ ອາຄານ ແລະ ສິ່ງປຸກສ້າງ ຂອງສະຖານພັດທະນາສີມືແຮງງານ 6 ແຫ່ງ ດ້ວຍການປະມູນເປີດກວ້າງ. ສັນຍາເລກທີ : NCB C2.2-CW-1 , NCB C2.2-CW-2, NCB C2.2-CW-3, NCB C2.2-CW-4, NCB C2.2-CW-5.
2. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະຖາບັນພັດທະນາສີມືແຮງງານ, (ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ) ຂໍເຊີນບໍລິສັດຂອງທ່ານ ເຂົ້າຍື່ນຊອງປະມູນ ການປັບປຸງ-ຕໍ່ເຕີມ ອາຄານ ແລະ ສິ່ງປຸກສ້າງ ຂອງສະຖານບັນພັດທະນາສີມືແຮງງານ 6 ແຫ່ງ: 1. ສະຖາບັນພັດທະນາສີມືແຮງງານ, 2. ສູນພັດທະນາສີມືແຮງງານນະຄອນຫຼວງວຽງຈັນ, 3. ສູນພັດທະນາສີມືແຮງງານ ແຂວງສະຫວັນນະເຂດ, 4. ສູນພັດທະນາສີມືແຮງງານ ແຂວງຈໍາປາສັກ, 5. ສູນພັດທະນາສີມືແຮງງານ ແຂວງອັດຕະປື, 6. ສູນພັດທະນາສີມືແຮງງານ ແຂວງບໍ່ແກ້ວ. ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ [6 ເດືອນ].
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຕາມທີ່ໄດ້ລະບຸໄວ້ໃນ ທິດນໍາ: ຂອງທະນາຄານໂລກ ວ່າດ້ວຍ: ການຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການ ທີ່ບໍ່ແມ່ນດ້ານທີ່ປຶກສາ, ພາຍໃຕ້ການກູ້ຢືມຂອງ IBRD, ທຶນ IDA & ທຶນຊ່ວຍເຫລືອລ້າ ຂອງຜູ້ກູ້ຢືມເງິນຈາກທະນາຄານ
4. ບໍລິສັດທີ່ມີຄວາມເໝາະສົມ ມີຄວາມສົນໃຈ ສາມາດພິວພັນເອົາເອກະສານປະມູນຄົບຊຸດເປັນ [ພາສາລາວ] ໂດຍຍື່ນໜັງສືຫາທີ່ຢູ່ ສະຖາບັນພັດທະນາສີມືແຮງງານ (ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ), ບ້ານ ຄໍາຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ໂທລະສັບ: 94479799 ອີເມລ: psgproject.proc@gmail.com; xanaphaypx@gmail.com;
5. ເອກະສານປະມູນ ຈະສົ່ງໃຫ້ບໍລິສັດ ທາງ ອີເມວ.
6. ກອງປະຊຸມກ່ອນການເປີດຊອງຈະຈັດຂຶ້ນໃນວັນທີ 18 ສິງຫາ 2025, ເວລາ 9,00-11,30 ເຊົ້າ, ທີ່ຕຶກໄອທີຫ້ອງປະຊຸມ ຊັ້ນ 2 ຂອງສະຖາບັນພັດທະນາສີມືແຮງງານ.
7. ຊອງປະມູນຈະຕ້ອງສົ່ງຫາ ສະຖາບັນພັດທະນາສີມືແຮງງານ (ຫ້ອງປະຊຸມຕຶກໄອທີ ຊັ້ນ 2) ບ້ານ ຄໍາຮຸ່ງ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 94479799 ວັນ ເວລາ ເປີດຊອງປະມູນ ແມ່ນ 9:00 ເຊົ້າ-14:30 ມ ບ່າຍ ຂອງວັນທີ 09 ກັນຍາ 2025
8. ຈະບໍ່ອະນຸຍາດໃຫ້ສົ່ງຊອງປະມູນຊ້າ ທີ່ກໍານົດໄວ້ໃນຂ້າງເທິງ ແລະ ຈະຖືກປະຕິເສດ. ການເປີດຊອງປະມູນຈະເປີດເຊິ່ງໜ້າສາທາລະນະໂດຍຊ່ອງໜ້າຄະນະກໍາມະການທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ກໍານົດໄວ້ຂ້າງເທິງ.
9. ທຸກໆເອກະສານຈະຕ້ອງປະກອບການຄໍ້າປະກັນການປະມູນດ້ວຍກຽດ.

ຫົວໜ້າສະຖາບັນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ສະຖາບັນພັດທະນາສີມືແຮງງານ

ປອ ບຸນມາ ສິດທິໄສມ

Scanned with CamScanner